**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ລັດຖະບານ ເລກທີ............./ລບ

ນະຄອນຫຼວງວຽງຈັນ, ວັນທີ...................

# ດຳລັດ
# ວ່າດ້ວຍ ຄັງແຮແນວພັນເຂົ້າ

- ອີງຕາມ ກົດໝາຍ ວ່າດ້ວຍລັດຖະບານ ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍ ວ່າດ້ວຍການປູກຝັງ ສະບັບເລກທີ 84/ສພຊ, ລົງວັນທີ 25 ມິຖຸນາ 2025;
- ອີງຕາມ ໜັງສືສະເໜີ ຂອງກະຊວງກະສິກຳ ແລະ ສິ່ງແວດລ້ອມ ສະບັບເລກທີ......../ກສ, ລົງວັນທີ .......

## ລັດຖະບານ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບ ການຄຸ້ມຄອງ, ຕິດຕາມ ກວດກາວຽກງານຄັງແຮແນວພັນເຂົ້າ ເພື່ອຮັບປະກັນວຽກງານດັ່ງກ່າວ ມີປະສິດທິຜົນ ແນໃສ່ຊຸກຍູ້ ແລະ ສົ່ງເສີມການສ້າງຄັງແຮແນວພັນເຂົ້າ ຕອບສະໜອງ ໃຫ້ແກ່ຜູ້ປະສົບໄພ ນ້ຳຖ້ວມ, ແຫ້ງແລ້ງ, ສັດຕູພືດທຳລາຍ ລວມທັງຊ່ວຍເຫຼືອຊາວກະສິກອນ ທີ່ຂາດແຄນແນວພັນເຂົ້າ ໃນການຜະລິດຕາມລະດູການ, ທັງຮັບປະກັນ ຄວາມໝັ້ນຄົງທາງດ້ານສະບຽງອາຫານ, ໂພຊະນາການ ແລະ ການຜະລິດເປັນສິນຄ້າ, ສາມາດເຊື່ອມໂຍງກັບ ພາກພື້ນ ແລະ ສາກົນ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ.

**ມາດຕາ 2 ຄັງແຮແນວພັນເຂົ້າ**

ຄັງແຮແນວພັນເຂົ້າ ແມ່ນລະບົບການບໍລິຫານຈັດການ ແລະ ເກັບຮັກສາແນວພັນເຂົ້າທີ່ດີ, ມີຄຸນ ນະພາບ ເພື່ອສຳຮອງໄວ້ ໃຫ້ແກ່ຜູ້ປະສົບໄພ ນ້ຳຖ້ວມ, ແຫ້ງແລ້ງ, ສັດຕູພືດທຳລາຍ, ປ້ອງກັນການຂາດແຄນ ແນວພັນເຂົ້າ ທັງເປັນການ ຄັດສົມ, ດຸ່ນດ່ຽງ, ແຈກຢາຍ ແລະ ສະໜອງແນວພັນເຂົ້າ ໃຫ້ແກ່ຊາວກະສິກອນ, ກຸ່ມ ແລະ ສະຫະກອນ ທີ່ຂາດແຄນແນວພັນເຂົ້າ ໃນລະດູການຜະລິດ.

**ມາດຕາ 3 ການອະທິບາຍສັບ**

ຄຳສັບທີ່ນຳໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

**1. ຊາວກະສິກອນ** ໝາຍເຖິງ ຜູ້ເຮັດການຜະລິດກະສິກຳເປັນອາຊີບ ເຊັ່ນ ການປູກຝັງ, ການລ້ຽງສັດ ແລະ ການປະມົງ;

**2. ກຸ່ມ** ໝາຍເຖິງ ການຈັດຕັ້ງເສດຖະກິດລວມໝູ່ຂອງປະຊາຊົນລາວທີ່ມີອາຊີບ ກະສິກຳ, ຫັດຖະກຳ, ຄ້າຂາຍ, ການບໍລິການ ຫຼື ອາຊີບອື່ນ ທີ່ສ້າງຕັ້ງຂຶ້ນດ້ວຍຄວາມສະໝັກໃຈ ເພື່ອຮ່ວມມືຊ່ວຍເຫຼືອ ຊຶ່ງກັນ ແລະ ກັນ ລະຫວ່າງ ສະມາຊິກ ແລະ ຄອບຄົວສະມາຊິກດ້ວຍກັນ ທາງດ້ານການຜະລິດ ແລະ ການບໍລິການ;

**3. ສະຫະກອນ** ໝາຍເຖິງ ການຈັດຕັ້ງທຸລະກິດລວມໝູ່ຂອງຜູ້ປະກອບອາຊີບ ກະສິກຳ, ຫັດຖະກຳ, ຄ້າຂາຍ, ການບໍລິການ ຫຼື ອາຊີບອື່ນ ທີ່ສ້າງຕັ້ງຂຶ້ນດ້ວຍຄວາມສະໝັກໃຈ ເພື່ອຮ່ວມມືຊ່ວຍເຫຼືອ ຊຶ່ງກັນ ແລະ ກັນ ທາງດ້ານທຶນຮອນ, ປະສົບການ, ເຕັກນິກ, ວິຊາການ, ການແກ້ໄຂບັນຫາຮ່ວມກັນ ແລະ ການແບ່ງປັນຜົນປະໂຫຍດຈາກການດຳເນີນກິດຈະການ;

**4. ໂພຊະນາການ** ໝາຍເຖິງ ອາຫານທີ່ມີທາດບຳລຸງລ້ຽງ, ມີປະໂຫຍດ ແລະ ມີຄວາມປອດໄພ ເພື່ອເຮັດຮ່າງກາຍຈະເລີນເຕີບໂຕ, ມີຄວາມສົມດູນ ແລະ ມັນສະໝອງມີການພັດທະນາ;

**5. ການຢັ້ງຢືນແນວພັນເຂົ້າ** ໝາຍເຖິງ ຂະບວນການກວດກາພື້ນທີ່ການຜະລິດ ແລະ ການທົດສອບຄຸນນະພາບເມັດເຂົ້າ ຕາມມາດຕະຖານຄຸນນະພາບ ທີ່ໄດ້ກຳນົດໄວ້ໃນລະບຽບການສະເພາະ.

### ມາດຕາ 4 ຫຼັກການ ກ່ຽວກັບຄັງແຮແນວພັນເຂົ້າ

ວຽກງານສ້າງຄັງແຮແນວພັນເຂົ້າໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບ ນະໂຍບາຍ, ກົດໝາຍ, ວິໄສທັດ, ຍຸດທະສາດ ແລະ ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ, ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນ ທີ່ກ່ຽວຂ້ອງ;
2. ຄຸ້ມຄອງຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ;
3. ຮັບປະກັນການສະໜອງແນວພັນເຂົ້າທີ່ມີຄຸນນະພາບດີ, ໃຫ້ພຽງພໍກັບຄວາມຕ້ອງການຜະລິດ;
4. ຮັບປະກັນຜົນປະໂຫຍດຂອງລັດ, ລວມໝູ່, ຄອບຄົວ, ຜູ້ໄດ້ຮັບອະນຸຍາດສ້າງຕັ້ງຄັງແຮແນວພັນເຂົ້າ ໃນການສ້າງຕັ້ງຄັງແຮແນວພັນເຂົ້າ;
5. ການມີສ່ວນຮ່ວມຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ;
6. ຮັບປະກັນ ຄວາມໂປ່ງໃສ, ຍຸຕິທຳ ແລະ ສາມາດກວດສອບໄດ້;
7. ຮັບປະກັນການປະສານສົມທົບ ກັບຂະແໜງການ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ.

### ມາດຕາ 5 ຂອບເຂດການນຳໃຊ້

ດຳລັດສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດທີ່ເຄື່ອນໄຫວ ແລະ ພົວພັນກັບວຽກງານຄັງແຮແນວພັນເຂົ້າ ຢູ່ ສປປ ລາວ.

### ມາດຕາ 6 ການຮ່ວມມືກັບສາກົນ

ລັດ ສົ່ງເສີມການພົວພັນຮ່ວມມື ກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານຄັງແຮແນວພັນເຂົ້າ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນ ຂ່າວສານ, ເຕັກນິກ, ເຕັກໂນໂລຊີ, ການພັດທະນາຊັບພະຍາກອນມະນຸດ ລວມທັງການສ້າງຄວາມເຂັ້ມແຂງໃຫ້ແກ່ ຊາວກະສິກອນ, ກຸ່ມ, ສະຫະກອນ ແລະ ຜູ້ໄດ້ຮັບອະນຸຍາດສ້າງຕັ້ງຄັງແຮແນວພັນເຂົ້າ ເພື່ອເຮັດໃຫ້ວຽກງານດັ່ງກ່າວມີປະສິດທິພາບ ແລະ ປະສິດທິຜົນ ສອດຄ່ອງກັບສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນ ທີ່ກ່ຽວຂ້ອງ.

## ໝວດທີ 2
## ປະເພດຄັງແຮແນວພັນເຂົ້າ

### ມາດຕາ 7 ປະເພດຄັງແຮແນວພັນເຂົ້າ

ປະເພດຄັງແຮແນວພັນເຂົ້າ ປະກອບມີ ດັ່ງນີ້:

1. ຄັງແຮແນວພັນເຂົ້າ ຂອງລັດ;
2. ຄັງແຮແນວພັນເຂົ້າ ຂອງກຸ່ມ ແລະ ສະຫະກອນ;
3. ຄັງແຮແນວພັນເຂົ້າ ຂອງຜູ້ໄດ້ຮັບອະນຸຍາດສ້າງຕັ້ງຄັງແຮແນວພັນເຂົ້າ.

**ມາດຕາ 8 ຄັງແຮແນວພັນເຂົ້າຂອງລັດ**

ຄັງແຮແນວພັນເຂົ້າຂອງລັດ ແມ່ນການບໍລິຫານຈັດການ ແລະ ເກັບຮັກສາແນວພັນເຂົ້າທີ່ດີ, ມີຄຸນນະພາບ ທີ່ດຳເນີນການໂດຍ ບັນດາສູນ ແລະ ສະຖານີຂອງລັດ ເປັນຕົ້ນ ສູນຄົ້ນຄວ້າແນວພັນເຂົ້າ, ສູນສາທິດເຕັກນິກກະສິກຳ, ສູນພັດທະນາກະສິກຳ, ສູນບໍລິການເຕັກນິກກະສິກຳ, ສະຖານີບໍລິການເຕັກນິກກະສິກຳ.

ກະຊວງກະສິກຳ ແລະ ສິ່ງແວດລ້ອມ ເປັນຜູ້ຄຸ້ມຄອງຄັງແຮແນວພັນເຂົ້າຂອງລັດ ໂດຍປະສານສົມທົບກັບກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ໃນການຄົ້ນຄວ້າ ສ້າງລະບຽບການ ກ່ຽວກັບຄັງແຮແນວພັນເຂົ້າ, ກຳນົດພື້ນທີ່, ຄັດເລືອກແນວພັນ ແລະ ມາດຕະຖານເຕັກນິກ-ເຕັກໂນໂລຊີ ໃນການເກັບຮັກສາ, ການປູກ, ດັດສົມ, ດຸ່ນດ່ຽງ ແລະ ແຈກຢາຍແນວພັນເຂົ້າ ໃຫ້ຜູ້ປະສົບໄພ ນ້ຳຖ້ວມ, ແຫ້ງແລ້ງ, ສັດຕູພືດທຳລາຍ, ຊາວກະສິກອນ, ກຸ່ມ ແລະ ສະຫະກອນ ທີ່ຂາດແຄນແນວພັນເຂົ້າ ໃນລະດູການຜະລິດ.

**ມາດຕາ 9 ຄັງແຮແນວພັນເຂົ້າຂອງກຸ່ມ ແລະ ສະຫະກອນ**

ຄັງແຮແນວພັນເຂົ້າ ຂອງກຸ່ມ ແລະ ສະຫະກອນ ແມ່ນການບໍລິຫານຈັດການ ແລະ ເກັບຮັກສາແນວພັນເຂົ້າທີ່ດີ, ມີຄຸນນະພາບ ທີ່ດຳເນີນການໂດຍ ກຸ່ມ ແລະ ສະຫະກອນ ທີ່ໄດ້ຮັບອະນຸຍາດ ຈາກຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 10 ຄັງແຮແນວພັນເຂົ້າຂອງຜູ້ໄດ້ຮັບອະນຸຍາດສ້າງຕັ້ງຄັງແຮແນວພັນເຂົ້າ**

ຄັງແຮແນວພັນເຂົ້າ ຂອງຜູ້ໄດ້ຮັບອະນຸຍາດສ້າງຕັ້ງຄັງແຮແນວພັນເຂົ້າ ແມ່ນການບໍລິຫານຈັດການ ແລະ ເກັບຮັກສາແນວພັນເຂົ້າທີ່ດີ, ມີຄຸນນະພາບ ທີ່ດຳເນີນການໂດຍຜູ້ໄດ້ຮັບອະນຸຍາດສ້າງຕັ້ງຄັງແຮແນວພັນເຂົ້າດ້ານແນວພັນເຂົ້າ ຫຼື ຜູ້ດຳເນີນກິດຈະການອື່ນ ທີ່ມີເງື່ອນໄຂຄົບຖ້ວນ ໃນການສ້າງຕັ້ງຄັງແຮແນວພັນເຂົ້າ ຊຶ່ງໄດ້ຮັບອະນຸຍາດ ຈາກຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 3
## ການອະນຸຍາດສ້າງຕັ້ງຄັງແຮແນວພັນເຂົ້າ

**ມາດຕາ 11 ການອະນຸຍາດການສ້າງຕັ້ງຄັງແຮແນວພັນເຂົ້າ**

ຜູ້ທີ່ມີຈຸດປະສົງ ສ້າງຕັ້ງຄັງແຮແນວພັນເຂົ້າ ຕ້ອງຂໍຂຶ້ນທະບຽນວິສາຫະກິດ ຫຼື ແຈ້ງເພີ່ມກິດຈະການເຂົ້າໃນໃບທະບຽນວິສາຫະກິດ ນຳຂະແໜງອຸດສາຫະກຳ ແລະ ການຄ້າ ແລ້ວຂໍອະນຸຍາດສ້າງຕັ້ງຄັງແຮແນວພັນເຂົ້າ ນຳຂະແໜງກະສິກຳ ແລະ ສິ່ງແວດລ້ອມ.

ສຳລັບ ກຸ່ມ, ສະຫະກອນ ແລະ ການຈັດຕັ້ງລັດ ທີ່ມີຈຸດປະສົງສ້າງຕັ້ງຄັງແຮແນວພັນເຂົ້າ ຕ້ອງຂໍອະນຸຍາດສ້າງຕັ້ງ ຈາກຂະແໜງການກະສິກຳ ແລະ ສິ່ງແວດລ້ອມ.

**ມາດຕາ 12 ເງື່ອນໄຂຂອງການສ້າງຕັ້ງຄັງແຮແນວພັນເຂົ້າ**

ຜູ້ທີ່ມີຈຸດປະສົງ ສ້າງຕັ້ງຄັງແຮແນວພັນເຂົ້າ ຕ້ອງມີເງື່ອນໄຂຄົບຖ້ວນ ດັ່ງນີ້:

1. ມີຄວາມສະໝັກໃຈຢາກສ້າງຕັ້ງຄັງແຮແນວພັນເຂົ້າ ໂດຍກຳນົດຂອບເຂດການເຄື່ອນໄຫວໃຫ້ຈະແຈ້ງ ບໍ່ຂັດກັບລັດຖະທຳມະນູນ, ກົດໝາຍ ແລະ ລະບຽບການ, ບໍ່ກະທົບກັບຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ແລະ ສາມາດປະຕິບັດໄດ້;

2. ມີສະຖານທີ່ຕັ້ງໃນພື້ນທີ່ເໝາະສົມ, ມີຄວາມປອດໄພ, ເຂົ້າເຖິງໄດ້ງ່າຍ, ມີສະຖານທີ່ເກັບມ້ຽນແນວພັນເຂົ້າ ທີ່ຖືກຕ້ອງຕາມມາດຕະຖານ-ເຕັກນິກ ທີ່ກຳນົດໄວ້;

3. ມີການກຳນົດປະເພດ, ຊະນິດ ແລະ ປະລິມານແນວພັນທີ່ເກັບມ້ຽນ ເປັນຄັງແຮແນວພັນເຂົ້າ;

4. ມີການກຳນົດມາດຕະຖານການຄັດເລືອກແນວພັນ ທີ່ໄດ້ຄຸນນະພາບ ແລະ ເປັນທີ່ຕ້ອງການຂອງສັງຄົມ, ອັດຕາຄວາມງອກຕາມມາດຕະຖານ, ມີຄວາມທົນທານຕໍ່ພະຍາດ, ແມງໄມ້ ແລະ ສະພາບແວດລ້ອມ;

5. ເປັນແນວພັນ ທີ່ໄດ້ຮັບການຢັ້ງຢືນຈາກຂະແໜງການທີ່ກ່ຽວຂ້ອງ ໂດຍມີການບັນທຶກຂໍ້ມູນແນວພັນ, ແຫຼ່ງທີ່ມາ, ຄຸນລັກສະນະທາງດ້ານແນວພັນ, ວັນເວລາຈັດເກັບ ແລະ ອາຍຸການນຳໃຊ້ຂອງແນວພັນ;

6. ມີບຸກຄະລາກອນທີ່ຊຳນານ ທາງດ້ານເຕັກນິກການຜະລິດ, ເຕັກນິກການເກັບຮັກສາແນວພັນເຂົ້າ ແລະ ສາມາດຖ່າຍທອດຄວາມຮູ້ຄວາມສາມາດໃຫ້ແກ່ສັງຄົມໄດ້;

7. ມີຂໍ້ມູນໃນການແບ່ງປັນຜົນປະໂຫຍດ ລະຫວ່າງ ລັດ, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ;

8. ມີງົບປະມານ ຫຼື ແຫຼ່ງທຶນ ໃນການເຄື່ອນໄຫວວຽກງານຄັງແຮແນວພັນເຂົ້າ.

**ມາດຕາ 13 ເອກະສານປະກອບຂໍອະນຸຍາດສ້າງຕັ້ງຄັງແຮແນວພັນເຂົ້າ**

ເອກະສານປະກອບຂໍອະນຸຍາດສ້າງຕັ້ງຄັງແຮແນວພັນເຂົ້າມີ ດັ່ງນີ້:

1. ໜັງສືສະເໜີ ຫຼື ຄຳຮ້ອງ ຂໍສ້າງຕັ້ງຄັງແຮແນວພັນເຂົ້າ ທີ່ກຳນົດໄວ້;
2. ບົດວິພາກເສດຖະກິດ-ເຕັກນິກ;
3. ໃບຢັ້ງຢືນສະຖານະການເງິນ;
4. ສຳເນົາ ໃບທະບຽນວິສາຫະກິດ, ໃບອະນຸຍາດດຳເນີນທຸລະກິດກະສິກຳ ແລະ ສິ່ງແວດລ້ອມ ຖ້າເປັນນິຕິບຸກຄົນ;
5. ສຳເນົາ ໃບທະບຽນສະຫະກອນ ຖ້າເປັນສະຫະກອນ;
6. ສຳເນົາ ໃບອະນຸຍາດສ້າງຕັ້ງກຸ່ມ ຖ້າເປັນກຸ່ມ;
7. ເອກະສານອື່ນທີ່ຈຳເປັນ ແລະ ກ່ຽວຂ້ອງ.

**ມາດຕາ 14 ການພິຈາລະນາສ້າງຕັ້ງຄັງແຮແນວພັນເຂົ້າ**

ການພິຈາລະນາອະນຸຍາດສ້າງຕັ້ງຄັງແຮແນວພັນເຂົ້າ ໃຫ້ປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ຮັບ ແລະ ກວດກາ ໜັງສືສະເໜີ ຫຼື ຄຳຮ້ອງ, ເອກະສານປະກອບ ຂໍອະນຸຍາດສ້າງຕັ້ງຄັງແຮແນວພັນເຂົ້າ, ໃນກໍລະນີເຫັນວ່າເອກະສານບໍ່ຖືກຕ້ອງ ຫຼື ບໍ່ຄົບຖ້ວນ ໃຫ້ແຈ້ງຜູ້ສະເໜີ ຫຼື ຜູ້ຮ້ອງຂໍເປັນລາຍລັກອັກສອນ ພ້ອມທັງເຫດຜົນ ພາຍໃນ ຫ້າ ວັນລັດຖະການ ນັບແຕ່ວັນໄດ້ຮັບໜັງສືສະເໜີ ຫຼື ຄຳຮ້ອງ ເປັນຕົ້ນໄປ;

2. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອລົງກວດກາພື້ນທີ່ສ້າງຕັ້ງຄັງແຮແນວພັນເຂົ້າ, ຈັດກອງປະຊຸມປຶກສາຫາລື ແລະ ອອກໃບອະນຸຍາດສ້າງຕັ້ງຄັງແຮແນວພັນເຂົ້າ ພາຍໃນກຳນົດເວລາ ຊາວຫ້າ ວັນ ນັບແຕ່ໄດ້ຮັບ ໜັງສືສະເໜີ ຫຼື ຄຳຮ້ອງ ເປັນຕົ້ນໄປ.

ກົມສົ່ງເສີມກະສິກຳ ແລະ ສະຫະກອນ, ກະຊວງກະສິກຳ ແລະ ສິ່ງແວດລ້ອມ ອອກໃບອະນຸຍາດສ້າງຕັ້ງຄັງແຮແນວພັນເຂົ້າ ໃຫ້ແກ່ນິຕິບຸກຄົນ ທີ່ຂຶ້ນທະບຽນວິສາຫະກິດ ນຳກະຊວງອຸດສາຫະກຳ ແລະ ການຄ້າ ລວມທັງສະຫະກອນ ແລະ ການຈັດຕັ້ງລັດ ທີ່ສະເໜີສ້າງຕັ້ງນຳກະຊວງກະສິກຳ ແລະ ສິ່ງແວດລ້ອມ.

ພະແນກກະສິກຳ ແລະ ສິ່ງແວດລ້ອມຂັ້ນແຂວງ ອອກໃບອະນຸຍາດສ້າງຕັ້ງຄັງແຮແນວພັນເຂົ້າ ໃຫ້ແກ່ນິຕິບຸກຄົນ ທີ່ຂຶ້ນທະບຽນວິສາຫະກິດ ນຳພະແນກອຸດສາຫະກຳ ແລະ ການຄ້າຂັ້ນແຂວງ ລວມທັງສະຫະກອນ ແລະ ການຈັດຕັ້ງລັດ ທີ່ສະເໜີສ້າງຕັ້ງນຳພະແນກກະສິກຳ ແລະ ສິ່ງແວດລ້ອມຂັ້ນແຂວງ.

ຫ້ອງການກະສິກຳ ແລະ ສິ່ງແວດລ້ອມຂັ້ນເມືອງ ອອກໃບອະນຸຍາດສ້າງຕັ້ງຄັງແຮແນວພັນເຂົ້າ ໃຫ້ແກ່ນິຕິບຸກຄົນ ທີ່ຂຶ້ນທະບຽນວິສາຫະກິດ ນຳຫ້ອງການອຸດສາຫະກຳ ແລະ ການຄ້າຂັ້ນເມືອງ ລວມທັງກຸ່ມ ທີ່ສະເໜີສ້າງຕັ້ງນຳຫ້ອງການກະສິກຳ ແລະ ສິ່ງແວດລ້ອມຂັ້ນເມືອງ.

**ມາດຕາ 15 ໃບອະນຸຍາດສ້າງຕັ້ງຄັງແຮແນວພັນເຂົ້າ**

ໃບອະນຸຍາດສ້າງຕັ້ງຄັງແຮແນວພັນເຂົ້າ ແມ່ນ ເອກະສານຢັ້ງຢືນການສ້າງຕັ້ງຄັງແຮແນວພັນເຂົ້າ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ນຳໃຊ້ໄດ້ຕະຫຼອດໄລຍະການເຄື່ອນໄຫວຂອງຄັງແຮແນວພັນເຂົ້າ.

**ມາດຕາ 16 ການໂຈະ ໃບອະນຸຍາດສ້າງຕັ້ງຄັງແຮແນວພັນເຂົ້າ**

ຜູ້ທີ່ໄດ້ຮັບໃບອະນຸຍາດສ້າງຕັ້ງຄັງແຮແນວພັນເຂົ້າ ຈະຖືກໂຈະຕາມແຕ່ລະກໍລະນີ ດັ່ງນີ້:

1. ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບການສ້າງຕັ້ງຄັງແຮແນວພັນເຂົ້າ;

2. ປົດປັງ, ເຊື່ອງອຳ ແລະ ໃຫ້ຂໍ້ມູນ ກ່ຽວກັບການສ້າງຕັ້ງຄັງແຮແນວພັນເຂົ້າ ບໍ່ຖືກຕ້ອງ ແລະ ສອດຄ່ອງກັບຄວາມເປັນຈິງ;

3. ບໍ່ປະຕິບັດການແກ້ໄຂບັນຫາໃດໜຶ່ງ ກ່ຽວກັບການດຳເນີນກິດຈະການຄັງແຮແນວພັນເຂົ້າ ພາຍຫຼັງທີ່ໄດ້ຮັບໜັງສືແຈ້ງເຕືອນ ຈາກຂະແໜງກະສິກຳ ແລະ ສິ່ງແວດລ້ອມ;

4. ດຳເນີນກິດຈະການຄັງແຮແນວພັນເຂົ້າ ບໍ່ຖືກຕ້ອງຕາມຈຸດປະສົງ, ເປົ້າໝາຍ ຫຼື ກິດຈະການ ທີ່ໄດ້ຮັບອະນຸຍາດ;

5. ບໍ່ປະຕິບັດພັນທະທາງດ້ານການເງິນ ແລະ ພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ;

6. ມີການສະເໜີຂອງຜູ້ໄດ້ຮັບອະນຸຍາດສ້າງຕັ້ງຄັງແຮແນວພັນເຂົ້າ.

ການໂຈະໃບອະນຸຍາດສ້າງຕັ້ງຄັງແຮແນວພັນເຂົ້າ ຕ້ອງມີກຳນົດເວລາແນ່ນອນ ເພື່ອໃຫ້ເຈົ້າຂອງຄັງແຮແນວພັນເຂົ້າປັບປຸງແກ້ໄຂ.

ພາຍຫຼັງຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ໄດ້ໂຈະໃບອະນຸຍາດສ້າງຕັ້ງຄັງແຮແນວພັນເຂົ້າແລ້ວ ຕ້ອງແຈ້ງໃຫ້ຂະແໜງອຸດສາຫະກຳ ແລະ ການຄ້າ ແລະ ຂະແໜງການເງິນ ເພື່ອຊາບ.

**ມາດຕາ 17 ການຖອນໃບອະນຸຍາດສ້າງຕັ້ງຄັງແຮແນວພັນເຂົ້າ**

ໃບອະນຸຍາດສ້າງຕັ້ງຄັງແຮແນວພັນເຂົ້າ ຈະຖືກຖອນໃນກໍລະນີໃດໜຶ່ງ ດັ່ງນີ້:

1. ບໍ່ປັບປຸງ ແລະ ແກ້ໄຂ ຕາມການແຈ້ງໂຈະ ທີ່ກຳນົດໄວ້ໃນມາດຕາ 16 ຂອງດຳລັດ ສະບັບນີ້;

2. ບໍ່ດຳເນີນກິດຈະການສ້າງຕັ້ງຄັງແຮແນວພັນເຂົ້າ ພາຍໃນກຳນົດເວລາ ໜຶ່ງປີ ນັບແຕ່ວັນໄດ້ຮັບໃບອະນຸຍາດສ້າງຕັ້ງຄັງແຮແນວພັນເຂົ້າ;

3. ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບຄັງແຮແນວພັນເຂົ້າ ຢ່າງຮ້າຍແຮງ;

4. ມີຄວາມສະໝັກໃຈ ຂອງຜູ້ໄດ້ຮັບອະນຸຍາດສ້າງຕັ້ງຄັງແຮແນວພັນເຂົ້າ.

ພາຍຫຼັງຂະແໜງການກະສິກຳ ແລະ ສິ່ງແວດລ້ອມໄດ້ຖອນໃບອະນຸຍາດສ້າງຕັ້ງຄັງແຮແນວພັນເຂົ້າແລ້ວ ຕ້ອງແຈ້ງໃຫ້ຂະແໜງອຸດສາຫະກຳ ແລະ ການຄ້າ ພິຈາລະນາຍົກເລີກໃບທະບຽນວິສາຫະກິດຄັງແຮແນວພັນເຂົ້າ ຕາມກົດໝາຍ ແລະ ລະບຽບການ. ພ້ອມທັງແຈ້ງໃຫ້ຂະແໜງການ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ພາຍໃນເວລາ ຫ້າວັນລັດຖະການ ນັບແຕ່ວັນຖອນໃບອະນຸຍາດສ້າງຕັ້ງຄັງແຮແນວພັນເຂົ້າ ເປັນຕົ້ນໄປ.

## ໝວດທີ 4
## ສິດ ແລະ ພັນທະ ຂອງຜູ້ໄດ້ຮັບອະນຸຍາດສ້າງຕັ້ງຄັງແຮແນວພັນເຂົ້າ

**ມາດຕາ 18 ສິດຂອງຜູ້ໄດ້ຮັບອະນຸຍາດສ້າງຕັ້ງຄັງແຮແນວພັນເຂົ້າ**

ຜູ້ໄດ້ຮັບອະນຸຍາດສ້າງຕັ້ງຄັງແຮແນວພັນເຂົ້າ ມີ ສິດ ດັ່ງນີ້:

1. ໄດ້ຮັບ ແລະ ເຂົ້າເຖິງ ຂໍ້ມູນ ຂ່າວສານ ກ່ຽວກັບການສ້າງຕັ້ງຄັງແຮແນວພັນເຂົ້າ ຈາກຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ແລະ ຂະແໜງການອື່ນ ທີ່ກ່ຽວຂ້ອງ;

2. ດຳເນີນການຜະລິດ, ປຸງແຕ່ງ ແລະ ບໍລິການ ຄັງແຮແນວພັນເຂົ້າ ຕາມທີ່ໄດ້ຮັບອະນຸຍາດ;

3. ຄຸ້ມຄອງ ແລະ ນຳໃຊ້ຊັບສິນຂອງຕົນ, ເປັນເຈົ້າກຳມະສິດຕໍ່ຊັບສິນ ແລະ ຜົນໄດ້ຮັບຈາກການດຳເນີນກິດຈະການຄັງແຮແນວພັນເຂົ້າ ທີ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;

4. ໄດ້ຮັບການຊ່ວຍເຫຼືອ ແນະນຳທາງດ້ານ ເຕັກນິກ, ເຕັກໂນໂລຊີ ຈາກຂະແໜງການກະສິກຳ ແລະ ສິ່ງແວດລ້ອມ;

5. ໂອນ ກິດຈະການຂອງຕົນ ໃຫ້ບຸກຄົນອື່ນ ຫຼື ສືບທອດ ກິດຈະການ ຂອງບຸກຄົນອື່ນ ຕາມກົດໝາຍ;

6. ໄດ້ຮັບນະໂຍບາຍສົ່ງເສີມຈາກລັດ ທີ່ວາງອອກໃນແຕ່ລະໄລຍະ;

7. ຍາດແຍ່ງການຊ່ວຍເຫຼືອ ດ້ານເຕັກນິກ, ວິຊາການ ແລະ ທຶນ ຈາກພາກສ່ວນທີ່ກ່ຽວຂ້ອງ ທັງພາກລັດ, ເອກະຊົນ, ອົງການຈັດຕັ້ງສາກົນ ແລະ ອົງການຈັດຕັ້ງທາງສັງຄົມ ຕາມກົດໝາຍ ແລະ ລະບຽບການ;

8. ເຂົ້າຮ່ວມການວາງສະແດງ ແລະ ຈຳໜ່າຍສິນຄ້າແນວພັນ ຫຼື ຜະລິດຕະພັນສິນຄ້າຂອງຕົນ;

9. ເຂົ້າຮ່ວມກອງປະຊຸມ ແລະ ປະກອບຄຳເຫັນ ຕໍ່ການສ້າງຕັ້ງຄັງແຮແນວພັນເຂົ້າ;

10.ເຂົ້າເຖິງແຫຼ່ງທຶນ ທີ່ມີອັດຕາດອກເບ້ຍທີ່ເໝາະສົມ;

11.ນຳໃຊ້ ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 19 ພັນທະຂອງຜູ້ໄດ້ຮັບອະນຸຍາດສ້າງຕັ້ງຄັງແຮແນວພັນເຂົ້າ**

ຜູ້ທີ່ໄດ້ຮັບອະນຸຍາດສ້າງຕັ້ງຄັງແຮແນວພັນເຂົ້າ ມີພັນທະ ດັ່ງນີ້:

1. ຮັບຜິດຊອບຕໍ່ຂໍ້ມູນ ຕໍ່ການພິຈາລະນາອະນຸຍາດ**ສ້າງຕັ້ງຄັງແຮແນວພັນເຂົ້າ;**

2. ເສຍຄ່າທຳນຽມ ແລະ ຄ່າບໍລິການ ຕາມກົດໝາຍ ແລະ ລະບຽບການ;

3. ບໍ່ສ້າງ ຄວາມເສຍຫາຍ ແລະ ຜົນກະທົບ ຕໍ່ການຜະລິດຂອງຜູ້ອື່ນ ຫຼື ທຳມະຊາດ, ສິ່ງແວດລ້ອມ ແລະ ສັງຄົມ;

4. ໃຫ້ຄວາມຮ່ວມມືກັບ ພະນັກງານ-ລັດຖະກອນ ຫຼື ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ໃນການຕິດຕາມ ກວດກາ ການດຳເນີນກິດຈະການຄັງແຮແນວພັນເຂົ້າ;

5. ລາຍງານຜົນການດຳເນີນກິດຈະການຄັງແຮແນວພັນເຂົ້າ ຕໍ່ຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ເປັນແຕ່ລະໄລຍະ;

6. ແກ້ໄຂຄຳສະເໜີ ຂອງຜູ້ທີ່ໄດ້ຮັບຜົນກະທົບຈາກການສ້າງຕັ້ງຄັງແຮແນວພັນເຂົ້າ;

7. ປັບປຸງ, ແກ້ໄຂ ຕາມການແຈ້ງເຕືອນຂອງຂະແໜງການກະສິກຳ ແລະ ສິ່ງແວດລ້ອມ;

8. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 5
## ການສ້າງແຜນ ແລະ ກິດຈະການ ຄັງແຮແນວພັນເຂົ້າ

**ມາດຕາ 20 ການສ້າງແຜນຄັງແຮແນວພັນເຂົ້າ**

ຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ເປັນເຈົ້າການປະສານສົມທົບກັບ ຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ແລະ ຜູ້ໄດ້ຮັບອະນຸຍາດດຳເນີນກິດຈະການຄັງແຮແນວພັນເຂົ້າ ດຳເນີນການສ້າງແຜນຄັງແຮແນວພັນເຂົ້າໃນແຕ່ລະປີ ເພື່ອຮັບປະກັນໃຫ້ມີແນວພັນເຂົ້າທີ່ດີ, ມີຄຸນະພາບ ສຳຮອງໄວ້ໃນກໍລະນີ ເກີດໄພນ້ຳຖ້ວມ, ແຫ້ງແລ້ງ, ສັດຕູພືດທຳລາຍ ແລະ ປ້ອງກັນການຂາດແຄນແນວພັນເຂົ້າ.

ການສ້າງແຜນຄັງແຮແນວພັນເຂົ້າ ຕ້ອງຮັບປະກັນ ດັ່ງນີ້:

1. ກຳນົດເຂດພື້ນທີ່ ທີ່ມີຄວາມສ່ຽງໄພພິບັດ;

2. ກຳນົດເນື້ອທີ່, ປະເພດ ແລະ ປະລິມານແນວພັນເຂົ້າ ໃຫ້ເໝາະສົມກັບພື້ນທີ່ເປັນຕົ້ນ ການອະ ນຸລັກແນວພັນພື້ນເມືອງ, ແນວພັນທີ່ດີທາງພັນທຸກຳ, ແນວພັນທີ່ທົນທານຕໍ່ການປ່ຽນແປງດິນຟ້າອາກາດ;

3. ກຳນົດແຜນການຜະລິດ ເພື່ອທົດແທນຄືນ ໃນແຕ່ລະດູການຜະລິດ ໃຫ້ມີໄວ້ໃນຄັງແຮແນວພັນເຂົ້າ.

**ມາດຕາ 21 ກິດຈະການຄັງແຮແນວພັນເຂົ້າ**

ກິດຈະການຄັງແຮແນວພັນເຂົ້າ ມີ ດັ່ງນີ້:

1. ການສ້າງແຜນເຄື່ອນໄຫວ;
2. ການຜະລິດ ແລະ ການປຸງແຕ່ງ;
3. ການເກັບຮັກສາ;
4. ການແຈກຢາຍ ຫຼື ຈຳໜ່າຍ;
5. ການນຳເຂົ້າ ແລະ ສົ່ງອອກ;
6. ຄວາມປອດໄພ ແລະ ສຸຂານາໄມສາງ;
7. ການທົດແທນຄືນຄັງແຮແນວພັນເຂົ້າ.

**ມາດຕາ 22 ການສ້າງແຜນເຄື່ອນໄຫວ**

ຜູ້ໄດ້ຮັບອະນຸຍາດສ້າງຕັ້ງຄັງແຮແນວພັນເຂົ້າ ຕ້ອງສ້າງແຜນການເຄື່ອນໄຫວດຳເນີນກິດຈະການຂອງຕົນໃນແຕ່ລະປີ ເພື່ອເປັນຂໍ້ມູນໃຫ້ແກ່ ການຊຸກຍູ້, ຕິດຕາມ ກວດກາ ຂອງຂະແໜງການກະສິກຳ ແລະ ສິ່ງແວດລ້ອມ.

ແຜນການເຄື່ອນໄຫວກິດຈະການຄັງແຮແນວພັນເຂົ້າ ປະກອບມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ແຜນການຜະລິດ ຊຶ່ງແມ່ນ ບັນດາໜ້າວຽກ, ແຜນດຳເນີນງານ ຫຼື ກິດຈະກຳ ທີ່ຈະຈັດຕັ້ງປະຕິບັດໃນຮອບໜຶ່ງປີ ເປັນຕົ້ນ ເນື້ອທີ່ປູກ, ປະເພດແນວພັນ, ປັດໄຈການຜະລິດ;

2. ແຜນການຄຸ້ມຄອງ ຊຶ່ງແມ່ນ ບັນດາໜ້າວຽກ, ແຜນດຳເນີນງານ ຫຼື ກິດຈະກຳ ທີ່ຈະຈັດຕັ້ງປະຕິບັດໃນຮອບໜຶ່ງປີ ເປັນຕົ້ນ ການຈັດກອງປະຊຸມຝຶກອົບຮົມ, ການປັບປຸງການຈັດຕັ້ງ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ບຸກຄະລາກອນ, ການເກັບກ່ຽວ, ການປຸງແຕ່ງ, ການເກັບຮັກສາ, ງົບປະມານລົງທຶນ;

3. ແຜນການເຊື່ອມໂຍງ ແລະ ການປະສານງານ ຊຶ່ງແມ່ນ ບັນດາໜ້າວຽກ, ແຜນດຳເນີນງານ ຫຼື ກິດຈະກຳ ທີ່ຈະຈັດຕັ້ງປະຕິບັດໃນຮອບໜຶ່ງປີ ເປັນຕົ້ນ ການເຊື່ອມໂຍງດ້ານຕະຫຼາດ, ການຈຳໜ່າຍແນວພັນ, ການພົວພັນປະສານງານກັບພາກສ່ວນກ່ຽວຂ້ອງ ເພື່ອຮັບປະກັນການເຄື່ອນໄຫວດຳເນີນກິດຈະການຂອງຕົນມີປະສິດທິພາບ ແລະ ປະສິດທິຜົນ.

**ມາດຕາ 23 ການຜະລິດ ແລະ ການປຸງແຕ່ງ**

ການຜະລິດ ແມ່ນກິດຈະກຳຕົ້ນຕໍຂອງຄັງແຮແນວພັນເຂົ້າ ຊຶ່ງຕ້ອງຮັບປະກັນດຳເນີນການຜະລິດຕາມຂັ້ນຕອນເຕັກນິກດ້ານວິຊາການ ເພື່ອໃຫ້ໄດ້ປະລິມານ, ຄຸນນະພາບ ຕາມມາດຕະຖານ ແລະ ຄຸນລັກສະນະສະເພາະ ຕາມແຕ່ລະທ້ອງຖິ່ນ.

ການປຸງແຕ່ງ ແມ່ນກິດຈະກຳໜຶ່ງຂອງຄັງແຮແນວພັນເຂົ້າ ຊຶ່ງຕ້ອງຮັບປະກັນເຕັກນິກດ້ານວິຊາການຫຼັງການເກັບກ່ຽວ, ອົບໃຫ້ໄດ້ຄວາມຊຸ່ມ 12-14%, ຄັດເມັດພັນ ແລ້ວນຳໄປບັນຈຸ ແລະ ເກັບມ້ຽນໃນສະຖານທີ່ ທີ່ມີຄວາມເໝາະສົມ ແລະ ຖືກຕ້ອງຕາມເຕັກນິກດ້ານວິຊາການ.

**ມາດຕາ 24 ການເກັບຮັກສາ**

ການເກັບຮັກສາແນວພັນເຂົ້າ ແມ່ນຂະບວນການເກັບຮັກສາເມັດເຂົ້າພັນດີ ຫຼັງເກັບກ່ຽວ ເພື່ອຮັກສາຄຸນນະພາບ, ຄວາມງອກ ແລະ ຄວາມແຂງແຮງໄວ້ປູກໃນລະດູການຖັດໄປ ໂດຍເນັ້ນການຮັກສາຄວາມຊຸ່ມຂອງເມັດພັນເຂົ້າ ໃຫ້ຢູ່ໃນລະຫວ່າງ 12-14% ດ້ວຍການເກັບໄວ້ໃນພາຊະນະບັນຈຸ, ປິດສະໜິດ ທີ່ແຫ້ງ ແລະເຢັນ, ປ້ອງກັນການທຳລາຍຂອງແມງໄມ້, ສັດຕູພືດ ເພື່ອຮັກສາຄຸນນະພາບຂອງເມັດພັນເຂົ້າໄວ້.

ແນວພັນເຂົ້າທີ່ເກັບຮັກສາ ຕ້ອງໄດ້ຮັບການກວດສອບຄຸນນະພາບໃນແຕ່ລະໄລຍະ ເປັນຕົ້ນ ກວດສອບຄວາມງອກ, ຄວາມຊຸ່ມ, ສະຖານທີ່ເກັບຮັກສາ, ຂໍ້ມູນທາງດ້ານສະຖິຕິ.

**ມາດຕາ 25  ການຈຳໜ່າຍ**

ການຈຳໜ່າຍ ແມ່ນກິດຈະການໜຶ່ງຂອງຄັງແຮແນວພັນເຂົ້າ ຊຶ່ງເລີ່ມແຕ່ຂອດການສົ່ງຕໍ່ແນວພັນເຂົ້າທີ່ມີຄຸນນະພາບໃຫ້ແກ່ ຊາວກະສິກອນ, ກຸ່ມ ແລະ ສະຫະກອນ ທີ່ຂາດແຄນແນວພັນເຂົ້າໃນລະດູການຜະລິດ.

ການຈຳໜ່າຍແນວພັນເຂົ້າ ຕ້ອງຢູ່ພາຍໃຕ້ການຄວບຄຸມ ແລະ ກວດກາ ຢ່າງຮັດກຸມ ດັ່ງນີ້:

1. ຮັບປະກັນແນວພັນທີ່ມີຄຸນນະພາບດີ ແລະ ບໍ່ມີສັດຕູພືດທຳລາຍ;
2. ທົດສອບອັດຕາຄວາມງອກ ກ່ອນຈຳໜ່າຍ;
3. ບັນຈຸ ແລະ ຕິດສະຫຼາກ ກ່ອນຈຳໜ່າຍທຸກຄັ້ງ ເຊັ່ນ ຊື່ແນວພັນ, ວັນທີຜະລິດ ແລະ ຄຳແນະນຳໃນການນຳໃຊ້ແນວພັນ;
4. ເກັບກຳຂໍ້ມູນຜູ້ຈະຮັບແນວພັນເຂົ້າ ເຊັ່ນ ຊື່ຜູ້ຮັບ, ສະຖານທີ່, ເປົ້າໝາຍການນຳໃຊ້.

**ມາດຕາ 26  ການນຳເຂົ້າ ແລະ ສົ່ງອອກ**

ຜູ້ໄດ້ຮັບອະນຸຍາດສ້າງຕັ້ງຄັງແຮແນວພັນເຂົ້າ ມີຈຸດປະສົງນຳເຂົ້າແນວພັນເຂົ້າ ຈາກຕ່າງປະເທດ ຍ້ອນການຂາດແຄນ ຫຼື ໄດ້ຮັບການຊ່ວຍເຫຼືອ ເພື່ອສະໜອງໃຫ້ແກ່ຜູ້ປະສົບໄພ ນ້ຳຖ້ວມ, ແຫ້ງແລ້ງ, ສັດຕູພືດທຳລາຍ ລວມທັງຊາວກະສິກອນ, ກຸ່ມ ແລະ ສະຫະກອນ ທີ່ຂາດແຄນແນວພັນເຂົ້າ ໃນລະດູການຜະລິດ ຕ້ອງໄດ້ຮັບອະນຸຍາດຈາກຂະແໜງກະສິກຳ ແລະ ສິ່ງແວດລ້ອມ ຕາມກົດໝາຍ ແລະ ລະບຽບການ.

ຜູ້ໄດ້ຮັບອະນຸຍາດສ້າງຕັ້ງຄັງແຮແນວພັນເຂົ້າ ມີຈຸດປະສົງສົ່ງອອກແນວພັນເຂົ້າ ໄປຕ່າງປະເທດ ເພື່ອການ ຊ່ວຍເຫຼືອ ຜູ້ປະສົບໄພພິບັດ ຫຼື ຂາດແຄນແນວພັນເຂົ້າ ຕ້ອງປະຕິບັດຕາມກົດໝາຍ, ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ ແລະ ໄດ້ຮັບການຢັ້ງຢືນຈາກຂະແໜງກະສິກຳ ແລະ ສິ່ງແວດລ້ອມ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 27  ຄວາມປອດໄພ ແລະ ສຸຂານາໄມສາງ**

ຄວາມປອດໄພ ແລະ ສຸຂານາໄມສາງ ແມ່ນ ການນຳໃຊ້ເຕັກນິກ ແລະ ມາດຕະການດ້ານວິຊາການ ເພື່ອເຮັດໃຫ້ແນວພັນເຂົ້າ ມີຄວາມປອດໄພ ແລະ ຖືກຕ້ອງຕາມມາດຕະຖານສຸຂານາໄມສາງ ແນໃສ່ຮັບປະກັນຄວາມປອດໄພຈາກເຊື້ອພະຍາດ, ແມງໄມ້, ສັດຕູພືດ ແລະ ຄວາມເສຍຫາຍອື່ນ ເປັນຕົ້ນ ການອະນາໄມສະພາບແວດລ້ອມສາງ, ການອະນາໄມສາງ, ການເກັບມ້ຽນແນວພັນເຂົ້າໄວ້ບ່ອນປອດໄພ.

**ມາດຕາ 28  ການທົດແທນຄືນຄັງແຮແນວພັນເຂົ້າ**

ຊາວກະສິກອນ, ກຸ່ມ, ສະຫະກອນ, ບຸກຄົນ ຫຼື ການຈັດຕັ້ງ ທີ່ຂາດແຄນແນວພັນເຂົ້າ ພາຍຫຼັງທີ່ໄດ້ຮັບການສະໜອງເຂົ້າຈາກຄັງແຮແນວພັນເຂົ້າແລ້ວ ຕ້ອງທົດແທນຄືນ ດ້ວຍຮູບການເປັນເງິນ, ວັດຖຸ ຫຼື ແນວພັນ ທີ່ມີຄຸນນະພາບດີ ຕາມສັນຍາ ໃຫ້ແກ່ຄັງແຮແນວພັນເຂົ້າ ເພື່ອຮັບປະກັນໃຫ້ມີແນວພັນເຂົ້າ ຢູ່ຄັງແຮແນວພັນເຂົ້າໃນການຕອບສະໜອງໃນອະນາຄົດ.

ຜູ້ໄດ້ຮັບອະນຸຍາດສ້າງຕັ້ງຄັງແຮແນວພັນເຂົ້າ ຕ້ອງມີແຜນການຜະລິດເພື່ອທົດແທນຄືນແນວພັນເຂົ້າໃນແຕ່ລະດູການຜະລິດ ເພື່ອເກັບມ້ຽນເປັນຄັງແຮແນວພັນເຂົ້າໄວ້ນຳໃຊ້ໃນຕໍ່ໜ້າ ແລະ ຮັບປະກັນການຂາດແຄນແນວພັນເຂົ້າ.

## ໝວດທີ 6
## ກອງທຶນຄັງແຮແນວພັນເຂົ້າ

**ມາດຕາ 29 ກອງທຶນຄັງແຮແນວພັນເຂົ້າ**

ກອງທຶນຄັງແຮແນວພັນເຂົ້າ ຂຽນຫຍໍ້ວ່າ **"ກນຂ"** ເປັນພາສາອັງກິດ "" ແມ່ນກອງທຶນທີ່ສ້າງຕັ້ງຂຶ້ນ ເພື່ອ

ລະດົມ ແລະ ສະສົມທຶນຈາກພາຍໃນ ແລະ ຕ່າງປະເທດ ດ້ວຍຮູບການຕ່າງໆ ແນ່ໃສ່ແກ້ໄຂບັນຫາທີ່ເກີດຈາກໄພນໍ້າຖ້ວມ, ແຫ້ງແລ້ງ, ສັດຕູພືດທໍາລາຍ ລວມທັງຊາວກະສິກອນ, ກຸ່ມ ແລະ ສະຫະກອນ ທີ່ບໍ່ສາມາດເຂົ້າເຖິງສະຖາບັນການເງິນ ເພື່ອທໍາການຜະລິດໃນແຕ່ລະດູການ.

**ມາດຕາ 30 ແຫຼ່ງລາຍຮັບກອງທຶນຄັງແຮແນວພັນເຂົ້າ**

ແຫຼ່ງລາຍຮັບກອງທຶນຄັງແຮແນວພັນເຂົ້າໄດ້ມາຈາກ:

1. ການປະກອບສ່ວນຂອງລັດ;
2. ການຊ່ວຍເຫຼືອລ້າ ແລະ ກູ້ຢືມຈາກພາຍໃນ ແລະ ຕ່າງປະເທດ;
3. ການປະກອບສ່ວນຂອງ ບຸກຄົນ, ນິຕິບຸກຄົນ, ລວມໝູ່ ຫຼື ການຈັດຕັ້ງ ດ້ວຍຄວາມສະໝັກໃຈ;
4. ໄດ້ຈາກດອກເບ້ຍເງິນຝາກ;
5. ລາຍຮັບອື່ນ ທີ່ຖືກຕ້ອງຕາມກົດໝາຍ.

**ມາດຕາ 31 ການຄຸ້ມຄອງ ແລະ ນໍາໃຊ້ກອງທຶນຄັງແຮແນວພັນເຂົ້າ**

ກອງທຶນຄັງແຮແນວພັນເຂົ້າ ຢູ່ພາຍໃຕ້ການຄຸ້ມຄອງຂອງ ກົມສົ່ງເສີມກະສິກໍາ ແລະ ສະຫະກອນ ຊຶ່ງກະຊວງກະສິກໍາ ແລະ ສິ່ງແວດລ້ອມ ເປັນຜູ້ກໍານົດໂຄງປະກອບການຈັດຕັ້ງຂອງກອງທຶນດັ່ງກ່າວ.

ກອງທຶນຄັງແຮແນວພັນເຂົ້າ ໃຫ້ນໍາໃຊ້ເຂົ້າໃນການຟື້ນຟູຜົນກະທົບຈາກໄພນໍ້າຖ້ວມ, ແຫ້ງແລ້ງ ແລະ ສັດຕູພືດທໍາລາຍ ລວມທັງການສະໜອງເງິນ ໃຫ້ແກ່ຊາວກະສິກອນ, ກຸ່ມ ແລະ ສະຫະກອນ ທີ່ບໍ່ສາມາດເຂົ້າເຖິງສະຖາບັນການເງິນ ເພື່ອທໍາການຜະລິດໃນແຕ່ລະດູການ ແລະ ນໍາໃຊ້ເຂົ້າໃນວຽກງານ ສົ່ງເສີມການນໍາໃຊ້ແນວພັນເຂົ້າທີ່ດີ, ການຈັດກອງປະຊຸມສໍາມະນາ, ຝຶກອົບຮົມ ແລະ ການໂຄສະນາເຜີຍແຜ່ ວຽກງານຄັງແຮແນວພັນເຂົ້າ ບົນພື້ນຖານຮັບປະກັນຄວາມໂປ່ງໃສ, ສາມາດກວດສອບໄດ້ ໂດຍສອດຄ່ອງກັບກົດໝາຍວ່າດ້ວຍງົບປະມານແຫ່ງລັດ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

ສໍາລັບການຈັດຕັ້ງ ແລະ ການເຄື່ອນໄຫວຂອງກອງທຶນຄັງແຮແນວພັນເຂົ້າ ໄດ້ກໍານົດໄວ້ ໃນລະບຽບການຕ່າງຫາກ.

## ໝວດທີ 7
## ການສົ່ງເສີມຄັງແຮແນວພັນເຂົ້າ

**ມາດຕາ 32 ການສົ່ງເສີມຄັງແຮແນວພັນເຂົ້າ**

ລັດສົ່ງເສີມ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ລົງທຶນສ້າງຕັ້ງຄັງແຮແນວພັນເຂົ້າ ເພື່ອຕອບສະໜອງແນວພັນເຂົ້າໃຫ້ແກ່ຜູ້ປະສົບໄພ ນໍ້າຖ້ວມ, ແຫ້ງແລ້ງ, ສັດຕູພືດທໍາລາຍ ລວມທັງຊາວກະສິກອນ, ກຸ່ມ, ສະຫະກອນ, ບຸກຄົນ ຫຼື ການຈັດຕັ້ງ ທີ່ຂາດແຄນແນວພັນເຂົ້າ ໃນລະດູການຜະລິດ. ພ້ອມກັນນັ້ນ, ກໍຊຸກຍູ້ສົ່ງເສີມຜູ້ໄດ້ຮັບອະນຸຍາດສ້າງຕັ້ງຄັງແຮແນວພັນເຂົ້າ ກ່ຽວກັບການຄົ້ນຄວ້າ, ພັດທະນາແນວພັນ, ຜະລິດ, ເກັບຊື້, ນໍາໃຊ້ເຕັກໂນໂລຊີທັນສະໄໝ ແລະ ກໍ່ສ້າງໂຄງລ່າງພື້ນຖານ ສໍາລັບການທ້ອນໂຮມ, ປຸງແຕ່ງ ແລະ ເກັບຮັກສາແນວພັນເຂົ້າ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ.

ລັດ ມີນະໂຍບາຍສົ່ງເສີມຕໍ່ຜູ້ໄດ້ຮັບອະນຸຍາດສ້າງຕັ້ງຄັງແຮແນວພັນເຂົ້າ ດັ່ງນີ້:

1. ເຕັກນິກທາງດ້ານວິຊາການ;
2. ການກວດກາຄຸນນະພາບແນວພັນເຂົ້າ;
3. ການເຂົ້າເຖິງແຫຼ່ງທຶນ;
4. ການສ້າງໂຄງລ່າງພື້ນຖານ;
5. ການເຂົ້າເຖິງຕະຫຼາດ.

**ມາດຕາ 33 ເຕັກນິກທາງດ້ານວິຊາການ**

ຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ສ້າງເງື່ອນໄຂສະດວກໃຫ້ແກ່ຜູ້ໄດ້ຮັບອະນຸຍາດສ້າງຕັ້ງຄັງແຮແນວພັນເຂົ້າ ແລະ ຜູ້ຜະລິດແນວພັນເຂົ້າ ດ້ວຍການຝຶກອົບຮົມເຕັກນິກທາງດ້ານວິຊາການ ກ່ຽວກັບ ການຜະລິດ, ປຸງແຕ່ງ, ເກັບຮັກສາ, ຈຳໜ່າຍ ແລະ ສຸຂານາໄມແນວພັນເຂົ້າ ລວມທັງ ເຕັກນິກການ ກວດກາ ແລະ ຢັ້ງຢືນຄຸນນະພາບແນວພັນເຂົ້າ.

**ມາດຕາ 34 ການກວດກາຄຸນນະພາບແນວພັນເຂົ້າ**

ຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ເປັນເຈົ້າການສົມທົບກັບຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ຜູ້ໄດ້ຮັບອະນຸຍາດດຳເນີນກິດຈະການຄັງແຮແນວພັນເຂົ້າ ເພື່ອດຳເນີນການກວດກາ ແລະ ອອກໃບຢັ້ງຢືນຄຸນນະພາບແນວພັນເຂົ້າ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 35 ການເຂົ້າເຖິງແຫຼ່ງທຶນ**

ກະຊວງການເງິນ, ທະນາຄານແຫ່ງ ສປປ ລາວ, ກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງກະສິກຳ ແລະ ສິ່ງແວດລ້ອມ, ກະຊວງອື່ນ, ອົງການຈັດຕັ້ງສາກົນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ຄົ້ນຄວ້າ ຊອກຫາແຫຼ່ງທຶນ ຫຼື ສ້າງເງື່ອນໄຂເອື້ອອຳນວຍໃຫ້ແກ່ ຊາວກະສິກອນ, ກຸ່ມ, ສະຫະກອນ ແລະ ຜູ້ໄດ້ຮັບອະນຸຍາດສ້າງຕັ້ງຄັງແຮແນວພັນເຂົ້າຄັງແຮແນວພັນເຂົ້າ ສາມາດເຂົ້າເຖິງແຫຼ່ງທຶນໄດ້.

ທະນາຄານແຫ່ງ ສປປ ລາວ ຊຸກຍູ້, ສົ່ງເສີມ ແລະ ສ້າງເງື່ອນໄຂໃຫ້ແກ່ທະນາຄານທຸລະກິດ ແລະ ສະຖາບັນການເງິນອື່ນ ສ້າງກົນໄກ, ປັບປຸງໂຄງສ້າງດ້ານສິນເຊື່ອ ແລະ ອອກຜະລິດຕະພັນດ້ານການເງິນຫຼາຍປະເພດໃນການສະໜອງສິນເຊື່ອ, ການຄ້ຳປະກັນສິນເຊື່ອ ແລະ ການເຊົ່າສິນເຊື່ອ ເພື່ອຮັບປະກັນໃຫ້ຜູ້ໄດ້ຮັບອະນຸຍາດສ້າງຕັ້ງຄັງແຮແນວພັນເຂົ້າ ສາມາດເຂົ້າເຖິງແຫຼ່ງທຶນໄດ້ຢ່າງທົ່ວເຖິງ.

**ມາດຕາ 36 ການສ້າງໂຄງລ່າງພື້ນຖານ**

ຂະແໜງການ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ເປັນເຈົ້າການຄົ້ນຄວ້າ ສ້າງ, ພັດທະນາ ແລະ ສະໜອງ ໂຄງລ່າງພື້ນຖານທີ່ຈຳເປັນ ຕາມແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ເພື່ອສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກໃຫ້ແກ່ພາກລັດ, ຜູ້ໄດ້ຮັບອະນຸຍາດສ້າງຕັ້ງຄັງແຮແນວພັນເຂົ້າ, ຊາວກະສິກອນ, ກຸ່ມ, ສະຫະກອນ ແລະ ພາກສ່ວນທີ່ກ່ຽວຂ້ອງ ສາມາດນຳໃຊ້ເຂົ້າໃນການດຳເນີນກິດຈະການຄັງແຮແນວພັນເຂົ້າ ເປັນຕົ້ນ ລານຕາກ, ສາງເກັບຮັກສາແນວພັນເຂົ້າ, ຊົນລະປະທານ, ເສັ້ນທາງຄົມມະນາຄົມ, ຕາໜ່າງໄຟຟ້າ, ການໂທລະຄົມມະນາຄົມ.

**ມາດຕາ 37 ການຂົ້າເຖິງຕະຫຼາດ**

ຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ເປັນເຈົ້າການປະສານສົມທົບກັບຂະແໜງການອຸດສາຫະກຳ ແລະ ການຄ້າ, ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ສ້າງເງື່ອນໄຂອຳນວຍຄວາມສະດວກ ແລະ ສະໜັບສະໜູນ ບຸນຄົນ, ນິຕິບຸກຄົນ, ລວມໝູ່ ແລະ ການຈັດຕັ້ງກ່ຽວຂ້ອງ ສາມາດເຂົ້າເຖິງ ແລະ ຂະຫຍາຍຕະຫຼາດ ດ້ວຍການຈັດງານວາງສະແດງສິນຄ້າ ແລະ ການບໍລິການດ້ານແນວພັນເຂົ້າ, ການໂຄສະນາແນວພັນເຂົ້າ, ການສຶກສາກ່ຽວກັບຕະຫຼາດ, ການແນະນຳຜະລິດຕະພັນ ແລະ ເຂົ້າຮ່ວມງານວາງສະແດງສິນຄ້າທັງພາຍໃນ ແລະ ຕ່າງປະເທດ, ການຈັບຄູ່ທຸລະກິດ ແລະ ການຮ່ວມລົງທຶນເພື່ອຂະຫຍາຍຕະຫຼາດແນວພັນເຂົ້າ.

ຂະແໜງການ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ສົ່ງເສີມໃຫ້ມີການຊົມໃຊ້ຜະລິດຕະພັນຂອງຄັງແຮແນວພັນເຂົ້າ, ສ້າງເງື່ອນໄຂ ແລະ ໃຫ້ໂອກາດແກ່ຜູ້ຜະລິດ, ຜູ້ຈຳໜ່າຍແນວພັນເຂົ້າ ແລະ ການບໍລິການ ກ່ຽວກັບຄັງແຮແນວພັນເຂົ້າ.

## ໝວດທີ 8
## ລະບົບຂໍ້ມູນຂ່າວສານ ກ່ຽວກັບຄັງແຮແນວພັນເຂົ້າ

**ມາດຕາ 38 ລະບົບຂໍ້ມູນຂ່າວສານ ກ່ຽວກັບຄັງແຮແນວພັນເຂົ້າ**

ລະບົບຂໍ້ມູນ ຂ່າວສານ ກ່ຽວກັບຄັງແຮແນວພັນເຂົ້າ ແມ່ນ ບ່ອນເກັບກຳ, ສັງລວມ, ວິເຄາະ, ວິໄຈ, ຕິດ ຕາມ ກວດກາ, ຈັດເປັນລະບົບ, ຮັກສາ, ເຜີຍແຜ່ ແລະ ສະໜອງຂໍ້ມູນ ຂ່າວສານ ກ່ຽວກັບວຽກງານຄັງແຮແນວພັນເຂົ້າ ໃນຮູບແບບເຈ້ຍ ແລະ ຮູບແບບເອເລັກໂຕຣນິກ.

**ມາດຕາ 39 ການແລກປ່ຽນຂໍ້ມູນ ຂ່າວສານ**

ກະຊວງກະສິກຳ ແລະ ສິ່ງແວດລ້ອມ ເປັນເຈົ້າການປະສານສົມທົບກັບຂະແໜງການ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ສ້າງ ແລະ ພັດທະນາລະບົບຂໍ້ມູນ ຂ່າວສານ ກ່ຽວກັບ ຄັງແຮແນວພັນເຂົ້າ ເພື່ອໃຫ້ສັງຄົມ ໄດ້ເຂົ້າເຖິງສະດວກ, ທັນການ ແລະ ເຊື່ອມຕໍ່ລະບົບຂໍ້ມູນ ຂ່າວສານ ກ່ຽວກັບວຽກງານຄັງແຮແນວພັນເຂົ້າ ລະຫວ່າງພາກສ່ວນຕ່າງໆທີ່ກ່ຽວຂ້ອງ.

ພະແນກກະສິກຳ ແລະ ສິ່ງແວດລ້ອມຂັ້ນແຂວງ, ຫ້ອງການກະສິກຳ ແລະ ສິ່ງແວດລ້ອມຂັ້ນເມືອງ ຄຸ້ມຄອງ ແລະ ນຳໃຊ້ລະບົບຂໍ້ມູນ ຂ່າວສານ ຄັງແຮແນວພັນເຂົ້າ ລວມທັງການສະໜອງ ແລະ ແລກປ່ຽນຂໍ້ມູນ ໃນຄວາມຮັບຜິດຊອບຂອງຕົນ.

**ມາດຕາ 40 ການເຂົ້າເຖິງ ແລະ ນຳໃຊ້ຂໍ້ມູນຂ່າວສານ ກ່ຽວກັບຄັງແຮແນວພັນເຂົ້າ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ສາມາດເຂົ້າເຖິງ ແລະ ນຳໃຊ້ຂໍ້ມູນ ຂ່າວສານ ກ່ຽວກັບກັບຄັງແຮແນວພັນເຂົ້າ ຕາມລະບຽບການ.

ຂະແໜງການ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ສະໜອງຂໍ້ມູນທີ່ຕິດພັນກັບການຜະລິດ, ການປຸງແຕ່ງ, ການເກັບຮັກສາ, ການແຈກຢາຍ ຫຼື ຈຳໜ່າຍ, ການນຳເຂົ້າ ແລະ ສົ່ງອອກ, ຄວາມປອດໄພ ແລະ ສຸຂານາໄມ, ການທົດແທນຄືນຄັງແຮແນວພັນເຂົ້າ ແລະ ຂໍ້ມູນອື່ນ ຕາມພາລະບົດບາດຂອງຕົນໃຫ້ແກ່ຊາວກະສິກອນ, ຜູ້ໄດ້ຮັບອະນຸຍາດສ້າງຕັ້ງຄັງແຮແນວພັນເຂົ້າ ດ້ວຍຮູບແບບເອເລັກໂຕຣນິກ, ປຶ້ມຄູ່ມື, ວາລະສານ, ແຜ່ນພັບໂຄສະນາ ແລະ ສື່ມວນຊົນອື່ນ.

## ໝວດທີ 9
## ຂໍ້ຫ້າມ

**ມາດຕາ 41 ຂໍ້ຫ້າມທົ່ວໄປ**

ຫ້າມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳດັ່ງນີ້:

1. ສ້າງອຸປະສັກ, ຂັດຂວາງ, ເມີນເສີຍ ແລະ ບໍ່ໃຫ້ຄວາມຮ່ວມມືໃນວຽກງານການສ້າງຄັງແຮແນວພັນເຂົ້າ;
2. ສວຍໃຊ້, ແອບອ້າງ ຫຼື ນຳໃຊ້ງົບປະມານຂອງຄັງແຮແນວພັນເຂົ້າ ເຄື່ອນໄຫວໄປໃນທາງທີ່ບໍ່ຖືກຕ້ອງ;
3. ປອມແປງ, ບິດເບືອນຂໍ້ມູນຂອງຕົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ ເພື່ອຜົນປະໂຫຍດຂອງຕົນ ຊຶ່ງສ້າງຄວາມເສຍຫາຍແກ່ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ;
4. ເປັນສື່ກາງໃນການໃຫ້-ຮັບ ສິນບົນ ຫຼື ຜົນປະໂຫຍດອື່ນ;
5. ແຊກແຊງການຈັດຕັ້ງພາຍໃນວຽກງານຄັງແຮແນວພັນເຂົ້າ;
6. ສ້າງຕັ້ງ ແລະ ເຄື່ອນໄຫວ ວຽກງານຄັງແຮແນວພັນເຂົ້າ ໂດຍທີ່ບໍ່ໄດ້ຮັບອະນຸຍາດ;
7. ສະໜອງແນວພັນເຂົ້າ ໂດຍທີ່ບໍ່ມີເປົ້າໝາຍ, ບໍ່ມີຈຸດສຸມ, ບໍ່ມີແຜນການລວງໜ້າ;
8. ມີພຶດຕິກຳອື່ນ ທີ່ເປັນການລະເມີດ ກົດໝາຍ ແລະ ລະບຽບການ.

**ມາດຕາ 42 ຂໍ້ຫ້າມສຳລັບຜູ້ໄດ້ຮັບອະນຸຍາດສ້າງຕັ້ງຄັງແຮແນວພັນເຂົ້າ**

ຫ້າມ ຜູ້ໄດ້ຮັບອະນຸຍາດສ້າງຕັ້ງຄັງແຮແນວພັນເຂົ້າ ມີ ພຶດຕິກຳໃດໜຶ່ງ ດັ່ງນີ້:

1. ດຳເນີນກິດຈະການຄັງແຮແນວພັນເຂົ້າ ໂດຍບໍ່ຖືກຕ້ອງຕາມທີ່ໄດ້ຮັບອະນຸຍາດ;
2. ສະໜອງຂໍ້ມູນທີ່ບໍ່ຖືກຕ້ອງ, ບໍ່ຊັດເຈນຕໍ່ພະນັກງານ-ລັດຖະກອນ ຫຼື ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;
3. ປອມແປງ, ບິດເບືອນຂໍ້ມູນຂອງຕົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ ເພື່ອຜົນປະໂຫຍດຂອງຕົນ ຊຶ່ງສ້າງຄວາມເສຍຫາຍແກ່ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ;
4. ໃຫ້ສິນບົນ ຫຼື ຜົນປະໂຫຍດອື່ນແກ່ພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;
5. ມີພຶດຕິກຳອື່ນ ທີ່ເປັນການລະເມີດ ກົດໝາຍ ແລະ ລະບຽບການ.

**ມາດຕາ 43 ຂໍ້ຫ້າມສຳລັບພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ**

ຫ້າມ ພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ທີ່ກ່ຽວຂ້ອງ ມີ ພຶດຕິກຳ ດັ່ງນີ້:

1. ເປີດເຜີຍຂໍ້ມູນທີ່ເປັນຄວາມລັບຂອງວຽກງານຄັງແຮແນວພັນເຂົ້າ;
2. ທວງ, ຮຽກ ຫຼື ຮັບ ເອົາສິນບົນ ແລະ ຜົນປະໂຫຍດອື່ນ ຈາກຜູ້ໄດ້ຮັບທຶນທົດແທນຈາກຄັງແຮແນວພັນເຂົ້າ;
3. ອອກ ຫຼື ປະຕິເສດ ການອອກໃບທະບຽນ ແລະ ໃບອະນຸຍາດດຳເນີນກິດຈະການ ໂດຍບໍ່ຖືກຕ້ອງຕາມໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
4. ກົດໜ່ວງ, ຖ່ວງດຶງ ຫຼື ສ້າງຄວາມຫຍຸ້ງຍາກ ໃຫ້ແກ່ການສ້າງຕັ້ງ ແລະ ການເຄື່ອນໄຫວກິດຈະການຄັງແຮແນວພັນເຂົ້າ;
5. ມີພຶດຕິກຳອື່ນ ທີ່ເປັນການລະເມີດ ກົດໝາຍ ແລະ ລະບຽບການ.

## ໝວດທີ 10
## ການຄຸ້ມຄອງ ແລະ ກວດກາ ວຽກງານຄັງແຮແນວພັນເຂົ້າ

**ມາດຕາ 44 ອົງການຄຸ້ມຄອງວຽກງານຄັງແຮແນວພັນເຂົ້າ**

ກະຊວງກະສິກຳ ແລະ ສິ່ງແວດລ້ອມ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບບັນດາກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງໃນການຄຸ້ມຄອງ ແລະ ກວດກາວຽກງານຄັງແຮແນວພັນເຂົ້າ.

ອົງການຄຸ້ມຄອງ ແລະ ກວດກາ ວຽກງານຄັງແຮແນວພັນເຂົ້າ ປະກອບດ້ວຍ:

1. ກະຊວງກະສິກຳ ແລະ ສິ່ງແວດລ້ອມ;
2. ພະແນກກະສິກຳ ແລະ ສິ່ງແວດລ້ອມ ຂັ້ນແຂວງ;
3. ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ຂັ້ນເມືອງ.

**ມາດຕາ 45 ສິດ ແລະ ໜ້າທີ່ ຂອງກະຊວງກະສິກຳ ແລະ ສິ່ງແວດລ້ອມ**

ກະຊວງກະສິກຳ ແລະ ສິ່ງແວດລ້ອມ ມີ ສິດ ແລະ ໜ້າທີ່ ດັ່ງນີ້

1. ຄົ້ນຄວ້າສ້າງ ນະໂຍບາຍ, ກົດໝາຍ ແລະ ແຜນຍຸດທະສາດ ກ່ຽວກັບວຽກງານຄັງແຮແນວພັນເຂົ້າ ເພື່ອສະເໜີລັດຖະບານ ພິຈາລະນາ;
2. ຜັນຂະຫຍາຍ ນະໂຍບາຍ, ກົດໝາຍ ແລະ ແຜນຍຸດທະສາດ ກ່ຽວກັບວຽກງານຄັງແຮແນວພັນເຂົ້າ ໃຫ້ເປັນແຜນການ, ແຜນງານ, ໂຄງການ ແລະ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດ;
3. ໂຄສະນາ, ເຜີຍແຜ່ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານຄັງແຮແນວພັນເຂົ້າ;

4. ອອກໃບອະນຸຍາດສ້າງຕັ້ງຄັງແຮແນວພັນເຂົ້າ ທີ່ກະຊວງອຸດສາຫະກຳ ແລະ ການຄ້າ ຂຶ້ນທະບຽນວິສາຫະກິດ ແລະ ການຈັດຕັ້ງລັດ ທີ່ສະເໜີສ້າງຕັ້ງຄັງແຮແນວພັນເຂົ້າ;

5. ກວດກາ ແລະ ຢັ້ງຢືນຄຸນນະພາບແນວພັນເຂົ້າ;

6. ຄົ້ນຄວ້າພິຈາລະນາ ກ່ຽວກັບການ ໂຈະ ແລະ ຖອນ ໃບອະນຸຍາດສ້າງຕັ້ງຄັງແຮແນວພັນເຂົ້າ;

7. ອອກ ຂໍ້ຕົກລົງ, ຄຳສັ່ງ ແລະ ຄຳແນະນຳ ກ່ຽວກັບວຽກງານຄັງແຮແນວພັນເຂົ້າ;

8. ຕິດຕາມ ກວດກາ ການຈັດຕັ້ງປະຕິບັດວຽກງານແນວພັນເຂົ້າໃນທົ່ວປະເທດ;

9. ຊຸກຍູ້, ສົ່ງເສີມ ແລະ ເອື້ອອຳນວຍຄວາມສະດວກໃຫ້ແກ່ກຸ່ມ, ສະຫະກອນ ແລະ ການຈັດຕັ້ງລັດ ໃນການປະຕິບັດວຽກງານຄັງແຮແນວພັນເຂົ້າ;

10.ບຳລຸງ, ກໍ່ສ້າງ ແລະ ຍົກລະດັບ ພະນັກງານ ລັດຖະກອນ ທີ່ຮັບຜິດຊອບ ວຽກງານຄັງແຮແນວພັນເຂົ້າ ພ້ອມທັງປູກຈິດສຳນຶກໃຫ້ແກ່ທຸກພາກສ່ວນໃນສັງຄົມໄດ້ຮັບຮູ້ ແລະ ຈັດຕັ້ງປະຕິບັດ ຢ່າງກວ້າງ ຂວາງ;

11.ສ້າງຄູ່ມື, ຈັດກອງປະຊຸມ, ຝຶກອົບຮົມ ແລະ ສຳມະນາ ກ່ຽວກັບວຽກງານຄັງແຮແນວພັນເຂົ້າ ໃຫ້ສັງຄົມ ຮັບຊາບຢ່າງທົ່ວເຖິງ;

12.ຮັບ ແລະ ພິຈາລະນາ ແກ້ໄຂ ຄຳສະເໜີ ຂອງລວມໝູ່ ການຈັດຕັ້ງ, ບຸກຄົນ ຫຼື ນິຕິບຸກຄົນ ກ່ຽວກັບ ຄັງແຮແນວພັນເຂົ້າ;

13.ປະສານສົມທົບກັບ ກະຊວງ ຫຼື ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ເພື່ອຊຸກຍູ້ສົ່ງເສີມ ການພັດທະນາຄັງແຮແນວພັນເຂົ້າ;

14. ພົວພັນຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານຄັງແຮແນວພັນເຂົ້າ;

15. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານຄັງແຮແນວພັນເຂົ້າໃຫ້ລັດຖະບານຢ່າງເປັນປົກກະຕິ;

16. ນຳໃຊ້ ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 46 ສິດ ແລະ ໜ້າທີ່ ຂອງພະແນກກະສິກຳ ແລະ ສິ່ງແວດລ້ອມ ຂັ້ນແຂວງ**

ພະແນກກະສິກຳ ແລະ ສິ່ງແວດລ້ອມ ຂັ້ນແຂວງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ແຜນການ, ແຜນງານ, ໂຄງການ ກ່ຽວກັບວຽກງານຄັງແຮແນວພັນເຂົ້າ;

2. ໂຄສະນາເຜີຍແຜ່ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ແຜນການ, ແຜນງານ, ໂຄງການ ກ່ຽວຂ້ອງກັບວຽກງານຄັງແຮແນວພັນເຂົ້າ;

3. ອອກໃບອະນຸຍາດສ້າງຕັ້ງຄັງແຮແນວພັນເຂົ້າ ທີ່ພະແນກອຸດສາຫະກຳ ແລະ ການຄ້າ ຂັ້ນແຂວງ ຂຶ້ນທະບຽນວິສາຫະກິດ;

4. ກວດກາ ແລະ ຢັ້ງຢືນຄຸນນະພາບແນວພັນເຂົ້າ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;

5. ຄົ້ນຄວ້າພິຈາລະນາ ກ່ຽວກັບການ ໂຈະ ແລະ ຖອນ ໃບອະນຸຍາດສ້າງຕັ້ງຄັງແຮແນວພັນເຂົ້າ;

6. ຕິດຕາມກວດກາ ການຈັດຕັ້ງປະຕິບັດວຽກງານຄັງແຮແນວພັນເຂົ້າ ໂດຍສົມທົບກັບ ພະແນກແຜນການ, ອົງການ ແລະ ຄະນະກຳມະການປົກຄອງຂັ້ນເມືອງ ທີ່ກ່ຽວຂ້ອງ;

7. ຊຸກຍູ້, ສົ່ງເສີມ ແລະ ເອື້ອອຳນວຍຄວາມສະດວກໃຫ້ແກ່ກຸ່ມ, ສະຫະກອນ ແລະ ການຈັດຕັ້ງລັດ ໃນການປະຕິບັດວຽກງານຄັງແຮແນວພັນເຂົ້າ;

8. ບຳລຸງ, ກໍ່ສ້າງ ແລະ ຍົກລະດັບພະນັກງານ-ລັດຖະກອນ ທີ່ຮັບຜິດຊອບວຽກງານຄັງແຮແນວພັນເຂົ້າ;

9. ເກັບກຳ, ສັງລວມຂໍ້ມູນ ກ່ຽວກັບວຽກງານຄັງແຮແນວພັນເຂົ້າ ພ້ອມທັງປູກຈິດສຳນຶກໃຫ້ແກ່ທຸກພາກສ່ວນໃນສັງຄົມ ກ່ຽວກັບວຽກງານຄັງແຮແນວພັນເຂົ້າ;

10.ຮັບ ແລະ ພິຈາລະນາ ແກ້ໄຂຄຳສະເໜີ ຂອງບຸກຄົນ, ນິຕິບຸກຄົນ, ລວມໝູ່ ຫຼື ການຈັດຕັ້ງ ກ່ຽວກັບຄັງແຮແນວພັນເຂົ້າ;

11.ປະສານສົມທົບ ກັບພະແນກການ, ອົງການ ແລະ ຄະນະກຳມະການປົກຄອງຂັ້ນເມືອງ, ຄະນະກຳມະການປົກຄອງຕາແສງ ທີ່ກ່ຽວຂ້ອງ ເພື່ອຊຸກຍູ້, ສົ່ງເສີມການພັດທະນາວຽກງານຄັງແຮແນວພັນເຂົ້າ;

12.ພົວພັນ, ຮ່ວມມື ກັບຕ່າງປະເທດ ກ່ຽວກັບວຽກງານຄັງແຮແນວພັນເຂົ້າ ໃນພາກພື້ນ ແລະ ສາກົນ ຕາມການມອບໝາຍຂອງຂັ້ນເທິງ;

13.ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດ ວຽກງານຄັງແຮແນວພັນເຂົ້າ ໃຫ້ກະຊວງກະສິກຳ ແລະ ສິ່ງແວດລ້ອມ ແລະ ຄະນະກຳມະການປົກຄອງຂັ້ນແຂວງ ຢ່າງເປັນປົກກະຕິ;

14. ນຳໃຊ້ ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 47 ສິດ ແລະ ໜ້າທີ່ ຂອງຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ຂັ້ນເມືອງ**

ຫ້ອງການກະສິກຳ ແລະ ສິ່ງແວດລ້ອມຂັ້ນເມືອງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ແຜນການ, ແຜນງານ, ໂຄງການກ່ຽວກັບວຽກງານຄັງແຮແນວພັນເຂົ້າ;

2. ເຜີຍແຜ່ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ແຜນການ, ແຜນງານ, ໂຄງການກ່ຽວກັບວຽກງານຄັງແຮແນວພັນເຂົ້າ ໃຫ້ແກ່ປະຊາຊົນ ແລະ ທຸກພາກສ່ວນໃຫ້ຮັບຮູ້ ແລະ ເຂົ້າໃຈ;

3. ອອກໃບອະນຸຍາດສ້າງຕັ້ງຄັງແຮແນວພັນເຂົ້າ ທີ່ຫ້ອງການອຸດສາຫະກຳ ແລະ ການຄ້າ ຂັ້ນເມືອງ ຂຶ້ນທະບຽນວິສາຫະກິດ ແລະ ກຸ່ມ ທີ່ສະເໜີສ້າງຕັ້ງຄັງແຮແນວພັນເຂົ້າ;

4. ກວດກາ ແລະ ຢັ້ງຢືນຄຸນນະພາບແນວພັນເຂົ້າ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;

5. ຄົ້ນຄວ້າພິຈາລະນາ ກ່ຽວກັບການ ໂຈະ ແລະ ຖອນ ໃບອະນຸຍາດສ້າງຕັ້ງຄັງແຮແນວພັນເຂົ້າ;

6. ຊຸກຍູ້, ສົ່ງເສີມ ແລະ ເອື້ອອຳນວຍຄວາມສະດວກໃຫ້ແກ່ກຸ່ມ, ສະຫະກອນ ແລະ ການຈັດຕັ້ງລັດໃນການປະຕິບັດວຽກງານຄັງແຮແນວພັນເຂົ້າ;

7. ພິຈາລະນາ ແລະ ຢັ້ງຢືນ ການຈັດຕັ້ງປະຕິບັດ ວຽກງານຄັງແຮແນວພັນເຂົ້າ ໂດຍສົມທົບກັບຫ້ອງການ, ອົງການ, ຄະນະກຳມະການປົກຄອງຕາແສງ ແລະ ບ້ານ ທີ່ກ່ຽວຂ້ອງ;

8. ບຳລຸງ, ກໍ່ສ້າງ ແລະ ຍົກລະດັບພະນັກງານ-ລັດຖະກອນ ທີ່ຮັບຜິດຊອບວຽກງານຄັງແຮແນວພັນເຂົ້າ;

9. ເກັບກຳ, ສັງລວມຂໍ້ມູນ ກ່ຽວກັບວຽກງານຄັງແຮແນວພັນເຂົ້າ ພ້ອມທັງປູກຈິດສຳນຶກ ໃຫ້ແກ່ທຸກພາກສ່ວນໃນສັງຄົມ ກ່ຽວກັບວຽກງານຄັງແຮແນວພັນເຂົ້າ;

10.ຮັບ ແລະ ພິຈາລະນາ ແກ້ໄຂຄຳສະເໜີ ຂອງບຸກຄົນ, ນິຕິບຸກຄົນ, ລວມໝູ່ ຫຼື ການຈັດຕັ້ງ ກ່ຽວກັບຄັງແຮແນວພັນເຂົ້າ;

11.ປະສານສົມທົບ ກັບພາກສ່ວນກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານຄັງແຮແນວພັນເຂົ້າ;

12.ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດ ວຽກງານຄັງແຮແນວພັນເຂົ້າ ໃຫ້ພະແນກກະສິກຳ ແລະ ສິ່ງແວດລ້ອມ ຂັ້ນແຂວງ ແລະ ຄະນະກຳມະການປົກຄອງຂັ້ນເມືອງ ຢ່າງເປັນປົກກະຕິ;

13.ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 48 ສິດ ແລະ ໜ້າທີ່ ຂອງກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ**

ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ມີ ສິດ ແລະ ໜ້າທີ່ ປະສານສົມທົບ ແລະ ຮ່ວມມືກັບຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ໃນການຄຸ້ມຄອງ ແລະ ກວດກາ ວຽກງານຄັງແຮແນວພັນເຂົ້າ ຕາມພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕົນ.

**ມາດຕາ 49 ສິດ ແລະ ໜ້າທີ່ ຂອງຄະນະກຳມະການປົກຄອງຕາແສງ**

ຄະນະກຳມະການປົກຄອງຕາແສງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດ ຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ແຜນການ, ແຜນງານ, ໂຄງການກ່ຽວກັບວຽກງານຄັງແຮແນວພັນເຂົ້າ;

2. ເຜີຍແຜ່ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ແຜນການ, ແຜນງານ, ໂຄງການກ່ຽວກັບວຽກງານຄັງແຮແນວພັນເຂົ້າ ໃຫ້ແກ່ປະຊາຊົນ ແລະ ທຸກພາກສ່ວນໃຫ້ຮັບຮູ້ ແລະ ເຂົ້າໃຈ;

3. ຊຸກຍູ້, ສົ່ງເສີມ ແລະ ເອື້ອອຳນວຍຄວາມສະດວກໃຫ້ແກ່ກຸ່ມ, ສະຫະກອນ, ການຈັດຕັ້ງລັດ ໃນການຈັດຕັ້ງປະຕິບັດວຽກງານຄັງແຮແນວພັນເຂົ້າ;

4. ເກັບກຳ ແລະ ໃຫ້ຂໍ້ມູນ ກ່ຽວກັບວຽກງານຄັງແຮແນວພັນເຂົ້າ ພ້ອມທັງປູກຈິດສຳນຶກ ກ່ຽວກັບວຽກງານຄັງແຮແນວພັນເຂົ້າ ໃຫ້ແກ່ປະຊາຊົນໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

5. ຮັບ ແລະ ພິຈາລະນາ ແກ້ໄຂຄຳສະເໜີ ຂອງປະຊາຊົນ ກ່ຽວກັບຄັງແຮແນວພັນເຂົ້າ;

6. ປະສານສົມທົບ ກັບພາກສ່ວນກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານຄັງແຮແນວພັນເຂົ້າ;

7. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດ ວຽກງານຄັງແຮແນວພັນເຂົ້າ ໃຫ້ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ຂັ້ນເມືອງ ແລະ ຄະນະກຳມະການປົກຄອງຂັ້ນເມືອງ ຢ່າງເປັນປົກກະຕິ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 50 ເນື້ອໃນການກວດກາ**

ການກວດກາ ວຽກງານຄັງແຮແນວພັນເຂົ້າ ມີເນື້ອໃນ ດັ່ງນີ້:

1. ການປະຕິບັດ ດຳລັດສະບັບນີ້ ແລະ ລະບຽບການ ກ່ຽວກັບວຽກງານຄັງແຮແນວພັນເຂົ້າ;
2. ການປະຕິບັດໜ້າທີ່ ຂອງຄະນະກຳມະການ ແລະ ກອງທຶນຄັງແຮແນວພັນເຂົ້າ;
3. ການສ້າງ ແລະ ປະຕິບັດ ແຜນການ, ແຜນງານ, ໂຄງການ ແລະ ກິດຈະການ ຄັງແຮແນວພັນເຂົ້າ;
4. ເນື້ອໃນອື່ນທີ່ເຫັນວ່າມີຄວາມຈຳເປັນ.

**ມາດຕາ 51 ຮູບການການກວດກາ**

ການກວດກາວຽກງານຄັງແຮແນວພັນເຂົ້າມີ ສາມ ຮູບການດັ່ງນີ້:

1. ການກວດກາຕາມປົກກະຕິ ຊຶ່ງແມ່ນ ການກວດກາທີ່ດຳເນີນໄປຕາມແຜນການຢ່າງເປັນປະຈຳ ແລະ ມີກຳນົດເວລາທີ່ແນ່ນອນ;

2. ການກວດກາໂດຍແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນ ການກວດການອກແຜນການ ເມື່ອເຫັນວ່າ ມີຄວາມຈຳເປັນ ໂດຍແຈ້ງໃຫ້ເປົ້າໝາຍຖືກກວດກາ ຮູ້ກ່ອນລ່ວງໜ້າ;

3. ການກວດກາແບບກະທັນຫັນ ຊຶ່ງແມ່ນ ການກວດກາແບບຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ເປົ້າໝາຍຖືກກວດກາ ຮູ້ກ່ອນລ່ວງໜ້າ.

ໃນການດຳເນີນການກວດກາ ວຽກງານຄັງແຮແນວພັນເຂົ້າ ໃຫ້ປະຕິບັດຕາມກົດໝາຍຢ່າງເຂັ້ມງວດ.

## ໝວດທີ 11
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 52 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ, ລວມໝູ່ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດ ດຳລັດສະບັບນີ້ ເປັນຕົ້ນ ການຊຸກຍູ້, ສົ່ງເສີມ, ຄຸ້ມຄອງ, ການຕິດຕາມກວດກາວຽກງານຄັງແຮແນວພັນເຂົ້າ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 53 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ, ລວມໝູ່ ຫຼື ການຈັດຕັ້ງທີ່ລະເມີດດຳລັດສະບັບນີ້ ຈະຖືກ ສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ທີ່ຕົນໄດ້ກໍ່ຂຶ້ນ ຫຼື ລົງໂທດທາງອາຍາ ຕາມກົດໝາຍ.

## ໝວດທີ 12
## ບົດບັນຍັດສຸດທ້າຍ

**ມາດຕາ 54 ການຈັດຕັ້ງປະຕິບັດ**

ກະຊວງກະສິກຳ ແລະ ສິ່ງແວດລ້ອມ ເປັນເຈົ້າການ ຈັດຕັ້ງປະຕິບັດ ດຳລັດສະບັບນີ້ ໃຫ້ມີປະສິດທິຜົນ ແລະ ໄດ້ຮັບຜົນດີ.

ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດ ດຳລັດສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 55 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ .......................... ເປັນຕົ້ນໄປ.

**ຕາງໜ້າ ລັດຖະບານ ແຫ່ງ ສປປ ລາວ**
**ນາຍົກລັດຖະມົນຕີ**